# ໂຢເອນ

## ວັນລົງໂທດແຫ່ງພຣະເຢໂຮວາ

| | |
|---|---|
| ໃຈຄວາມສຳຄັນ | ຖືກໂທດ |
| ຂໍ້ຄວາມສຳຄັນ | ໒:໑໓ |
| ຈຳນວນບົດ | ໓ ບົດ |
| ເຣື່ອງເກີດຂຶ້ນແຕ່ປີ | ໘໗໐-໘໓໐ ກ່ອນ ຄ.ສ. |
| ປະຈຳຢູ່ທີ່ | ຢູດາ |
| ໂຢເອນແປວ່າ | ພຣະເຢໂຮວາເປັນພຣະເຈົ້າ |
| ຜູ້ທຳນວາຍຄົນທີ | ໒ |

໑. ວ່າດ້ວຍຄາວສໄນຂອງໂຢເອນ

ບໍ່ມີຄຳທີ່ສແດງຢ່າງແຈ່ມແຈ້ງວ່າ ເພິ່ນໄດ້ດຳເນີນຊີວິດເວລາໃດ ແຕ່ພວກ ຄຣູສອນຫລາຍ ຄົນວ່າ ໂຢເອນ ເປັນ ຄົນທຳນວາຍພາຍ ຫລັງອັບ ເດັຍເຊແຕ່ບໍ່ເຖິງ ເຫດຜົນທີ່ມາໃຫ້ຄິດກໍ່ມີດັ່ງນີ້

1. ໂຢເອນໄດ້ອອກຊື່ພວກສັດຕູ ເດີມຄືຊາວເຢດອມ, ຊາວເຟນີຊຽນ, ຊາວເອຄີບໂຕ, ຊາວຟີລິດຕິນ (ເບິ່ງ ໓:໔,໑໙) ສ່ວນຊາວບາບີໂລນຫລືຊາວອາຊີຣີນັ້ນຍັງບໍ່ມີ
2. ໂຢເອນບໍ່ໄດ້ອອກປາກເວົ້າເຖິງເຈົ້າຊີວິດແຕ່ເວົ້າເຖິງພວກເຖົ້າແກ່ ແລະ ພວກປະໂລຫິດສນັ້ນຄົນສ່ວນຫລາຍຈຶ່ງຄິດວ່າເປັນຄາວສໄນທີ່ກະສັດໂຢອາເຊ ຍັງເປັນເດັກນ້ອຍແລະໃນ

ສໄມ ປະໄລທິດເປໂຫ ຢາຕາ ເປັນຜູ້ປົກຄອງ ໔ ກະສັດ
໑໑:໑-໔໑

ມ. ມີຜູ້ທຳນວາຍຫລາຍຄົນໄດ້ ຈົດເອົາເນື້ອຄວາມຂອງໂຢເອນ
ໄວ້ຄືອາໂມດ ຈົດເອົາບົດທີ ໑:໔ ມ:໑໖ ເອຊາອີ, ໄຊ
ໂຟນີແລະເອເຊກຽນ

## ໒. ວ່າດ້ວຍເນື້ອຄວາມ

### ໑. ຝູງຕັກແຕນ

ມີຝູງຕັກແຕນມາກັດກິນເຄື່ອງປູກ ແລະ ຝົນບໍ່ຕົກເປັນເວລາ
ນານດ້ວຍ (ບົດທີ ໑)

### ໒. ວັນຂອງພຣະເປໂຮວາ

ຍັງມີອັນຕະລາຍອີກຢ່າງນຶ່ງທີ່ຈະເກີດຂຶ້ນພາຍໜ້າ ຈຶ່ງພວກທຳ
ນວາຍເອີ້ນວ່າວັນພຣະເຢໂຮວາ (໔:໑) ໂຢເອນບອກວ່າ
ອັນຕະລາຍທີ່ເກີດມາຈາກຕັກແຕນນັ້ນ ໄດ້ເບົາກວ່າອັນ-
ຕະລາຍທີ່ຈະເກີດມາໃນພາຍໜ້າ ຄືຊາວຕ່າງປະເທດຈະຍຶດ
ແລະທຳລາຍປະເທດອິສຣາເອັນ (໔:໑-໔,໑໑) ພຣະເຈົ້າ
ຈຶ່ງບອກພວກອິສຣາເອັນທາງຄຳທຳນວາຍນີ້ວ່າ ໃຫ້ຣະວັງ
ແລະໃຫ້ຫລັບຕັ້ງໃຈໃໝ່ ສມັ້ນໂຢເອັນຈຶ່ງຕັກເຕືອນໃຫ້ພວກ
ເຂົາຖືສິນອົດອາຫານແລະຫລັບມາຫາພຣະເຈົ້າ ເພື່ອພຣະ
ເຈົ້າຈະໄດ້ໂຜດຍົກໂທດແລະຊ່ອຍພວກເຂົາໃຫ້ພົ້ນ

## ໓. ການຈັດເປັນບົດ ຫົວຂໍ້ບົດ

ບົດທີ ໑ ອັນຕຣາຍເນື່ອງຈາກຝູງຕັກແຕນ

ບົດທີ ໒:໑–໑໗ ວັນຂອງພຣະເຢໂຮວາ ແລະ ຄໍາເຊີນໃຫ້ຫລົບຕັ້ງໃຈໃໝ່

ບົດທີ ໒:໑໘–໒໗ ພຣະເຈົ້າຊົງໂຜດຍົກໂທດ ແລະປະທານພຣະພອນ

ບົດທີ ໒:໒໘–໓:໒໑ ວ່າດ້ວຍຄວາມພຣະພອນທີ່ຈະມີໃນອານາ-ຄົດຄື

໑. ພຣະເຈົ້າຈະຖອກພຣະວິນຍານລົງໃສ່ເນື້ອໜັງທັງປວງ ໒:໒໘–໓:໒

໒. ພຣະເຈົ້າຈະຊົງທ້ອນໂຮມຊາວຢູດາແລະຊາວອິສຣາເອັນທີ່ເມືອງເຢຣູຊາເລັມ ໓:໑

໓. ພຣະເຈົ້າຈະຊົງພິພາກສາຊາວຕ່າງປະເທດ ໓:໒–໑໖

໔. ພຣະເຈົ້າຈະຊົງຕັ້ງຣາຊອານາຈັກຂອງພຣະອົງໄວ້ ໓:໑໗–໒໑